ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ..໐໑../ສພຂ.ຊຍ
ໄຊຍະບູລີ, ວັນທີ.16. ກຸມພາ 2023

**ມະຕິ**
**ກອງປະຊຸມສະພາປະຊາຊົນແຂວງ**
**ວ່າດ້ວຍ ການຮັບຮອງເອົາບົດລາຍງານ ຜົນການກວດກາຕາມຜົນການກວດສອບ ປະຈຳປີ 2020, ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງອົງການກວດກາລັດແຂວງ**

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 77 ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 12 ຂໍ້ 2.6 ແລະ ມາດຕາ 59 ຂໍ້ 2;
- ອີງຕາມ ບົດລາຍງານຂອງອົງການກວດກາລັດແຂວງ ສະບັບເລກທີ 894/ອກລ.ຊຍ, ລົງວັນທີ 29 ທັນວາ 2022.

ຜ່ານການຄົ້ນຄວ້າ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການ ປະຈຳປີ 2023 ຂອງ ອົງການກວດກາລັດແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

**ກອງປະຊຸມຕົກລົງ:**

**ມາດຕາ 1 ຮັບຮອງເອົາ ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ຜົນການກວດກາ ຕາມຜົນຂອງການກວດສອບ ປະຈຳປີ 2020.**

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດກາລັດແຂວງ ທີ່ໄດ້ເອົາໃຈໃສ່ ຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຂອງຕົນໃນເງື່ອນໄຂສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ແຕ່ກໍ່ສາມາດຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ: ຕິດຕາມ-ກວດກາຊຸກຍູ້ ຄະນະປະສານງານຂັ້ນແຂວງແກ້ໄຂຜົນຂອງການກວດສອບ ຕາມມາດຕະການ ແລະ ການແນະນຳຂອງອົງການກວດສອບປະຈຳພາກເໜືອ, ຕາມມະຕິສະພາປະຊາຊົນແຂວງ ສະບັບເລກທີ 74/ສພຂ.ຊຍ ວັນທີ 31 ທັນວາ 2021 ຈຳນວນ



ສະແກນດ້ວຍ CamScanner

19 ກໍລະນີ, ໃນນັ້ນ: ໄດ້ຮັບການປັບປຸງແກ້ໄຂຂາດຕົວມີ 6 ກໍລະນີ ບັນຫາທີ່ໄດ້ປັບປຸງແກ້ໄຂແຕ່ຍັງບໍ່ທັນຂາດຕົວມີ 13 ກໍລະນີ;

**ມາດຕາ 2 ຮັບຮອງເອົາ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023**

ກອງປະຊຸມ ເຫັນດີເປັນເອກະພາບ ຕໍ່ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023 ຂອງອົງການກວດກາລັດແຂວງ, ເປັນຕົ້ນແມ່ນ: ກໍລະນີທີ່ຍັງຄ້າງ, ແກ່ຍາວມາຫຼາຍປີ ແລະ ກໍລະນີທີ່ເກີດຂຶ້ນໃໝ່ທີ່ຈະຕ້ອງໄດ້ຮັບການຊຸກຍູ້ ປັບປຸງແກ້ໄຂ ໃຫ້ຂາດຕົວໃນຕໍ່ໜ້າ ຈໍານວນ 22 ກໍລະນີ; ໃນນີ້: ສົກປີ 2015-2016 ຈໍານວນ 6 ກໍລະນີ, ປີ 2017 ຈໍານວນ 1 ກໍລະນີ, ປີ 2018 ຈໍານວນ 4 ກໍລະນີ, ປີ 2019 ຈໍານວນ 1 ກໍລະນີ, ປີ 2020 ຈໍານວນ 1 ກໍລະນີ ແລະ ກໍລະນີທີ່ກວດສອບພົບເຫັນ ຈາກຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2021 ຈໍານວນ 9 ກໍລະນີ ຄື: (1) ການຄຸ້ມຄອງການຈັດຊື້ໃໝ່ຊັບສົມບັດຄົງທີ່ (ປະເພດພາຫະນະ), (2) ການຄຸ້ມຄອງເງິນກູ້ຢືມຈາກທະນະຄານແຫ່ງ ສປປລາວ, (3) ການຄິດໄລ່ລາຄາຫົວໜ່ວຍກໍ່ສ້າງໂຄງການລົງທຶນຂອງລັດ (ຂົວ-ທາງ), (4) ການຄຸ້ມຄອງບ້ວງເງິນກອງທຶນພັດທະນາບ້ານ, (5) ການຄຸ້ມຄອງໜີ້ສິນ, (6) ການສົມທຽບບັນຊີສະຖິຕິຕອນດິນ, (7) ການຄຸ້ມຄອງຕິດຕາມການຈໍາໜ່າຍ ແລະ ສົ່ງອອກແຮ່ທາດ, (8) ການແຕ່ງຕັ້ງຄະນະ ການຄຸ້ມຄອງ ແລະ ການບໍລິຫານກອງທຶນຢາເສບຕິດຂັ້ນແຂວງ, (9) ການຄຸ້ມຄອງສັນຍາເຊົ່າ-ສໍາປະທານທີ່ດິນຂອງລັດ.

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນການດັ່ງກ່າວ, ໃຫ້ໄດ້ຮັບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍ ຂອງປະຊຸມສະເໜີໃຫ້ເອົາໃຈໃສ່ດັ່ງນີ້:

1. ປັບປຸງກົນໄກປະສານງານ ລະຫວ່າງອົງການກວດກາລັດແຂວງ ກັບ ອົງການກວດສອບປະຈໍາພາກເໜືອ, ສະພາປະຊາຊົນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມກົມກຽວ ແລະ ຄ່ອງຕົວຫຼາຍຂຶ້ນກວ່າເກົ່າ ໂດຍສະເພາະ ການແລກປ່ຽນບົດຮຽນ, ການສະໜອງຂໍ້ມູນ ແລະ ເຂົ້າຮ່ວມແກ້ໄຂຜົນການກວດກາທີ່ຄ້າງຄາໃນໄລຍະຜ່ານມາ ໃຫ້ມີຜົນສໍາເລັດຫຼາຍຂຶ້ນ;
2. ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ພະນັກງານ ຂອງອົງການກວດກາລັດແຂວງ ໃຫ້ມີຄວາມຮູ້ດ້ານວິຊາສະເພາະທີ່ໜັກແໜ້ນ ແລະ ແນ່ນອນ, ເປັນມືອາຊີບ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານ ກວດກາໃນໄລຍະໃໝ່ ໃຫ້ມີຜົນສໍາເລັດ ແລະ ຄຸນນະພາບສູງກວ່າເກົ່າ;
3. ເມື່ອກວດກາພົບເຫັນກໍລະນີແລ້ວ ຕ້ອງເປັນເຈົ້າການຕິດຕາມ ຊຸກຍູ້ແກ້ໄຂຜົນຂອງການກວດກາຢ່າງເຂັ້ມງວດ, ຂາດຕົວ, ທັນການ ແລະ ຖືກຕ້ອງຕາມລະບຽບກົດໝາຍ;

**ມາດຕາ 3 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວປະຈໍາປີ 2023**

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ຂອງ ອົງການກວດກາລັດແຂວງໃຫ້ໄດ້ຮັບຜົນສໍາເລັດ ຕາມຈຸດປະສົງ ແລະ ລະດັບຄາດໝາຍ, ກອງປະຊຸມສະເໜີບາງມາດຕະການເພີ່ມເຕີມດັ່ງນີ້:

1. ປະສານສົມທົບກັບເປົ້າໝາຍກວດກາ, ອົງການຄຸ້ມຄອງເປົ້າໝາຍກວດກາ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການແກ້ໄຂຜົນການກວດກາ ໃຫ້ມີຄວາມເປັນເອກະພາບທາງດ້ານຫຼັກການ ແລະ ວິທີການ ເພື່ອຮັບປະກັນຄວາມສະເໝີພາບ ແລະ ຍຸຕິທໍາ ໃຫ້ທຸກເປົ້າໝາຍທີ່ຖືກກວດກາ;
2. ເອົາໃຈໃສ່ຊີ້ນໍາ ເປົ້າໝາຍທີ່ຖືກກວດກາ ແກ້ໄຂຜົນການກວດກາຕາມຜົນການກວດສອບ ຕາມບົດສະຫຼຸບຜົນການກວດກາ ທີ່ໄດ້ຕົກລົງເອກະພາບ ແລະ ລົງລາຍເຊັນຮ່ວມກັນແລ້ວໃຫ້ ເຂັ້ມງວດ ແລະ ຂາດຕົວ;
3. ຊີ້ນໍາຂະແໜງການຂັ້ນແຂວງ, ເມືອງ ໃຫ້ເອົາໃຈໃສ່ຮ່ວມມື, ປະສານສົມທົບ, ອໍານວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນທີ່ຈໍາເປັນ ເຂົ້າຮ່ວມວຽກງານກວດກາລັດແຂວງ ຢ່າງຕັ້ງໜ້າ; ສະໜອງງົບປະມານທີ່ຈໍາເປັນໃຫ້ອົງການກວດກາລັດແຂວງໄດ້ເຄື່ອນໄຫວວຽກງານກວດກາຕາມຜົນການກວດສອບ;



CamScanner

4. ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງ ສະພາປະຊາຊົນແຂວງ ຊຸດທີ II ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກຳ ຊີ້ນຳການຈັດຕັ້ງ ປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ມີປະສິດທິຜົນ;
5. ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງ, ຈັນຍາບັນ, ຈັນຍາທຳ, ນ້ຳໃຈບໍລິສຸດ ສັດຊື່ ແລະ ນ້ຳໃຈ ຮັບໃຊ້ປະຊາຊົນ ຂອງພະນັກງານ ອົງການກວດກາລັດແຂວງ, ຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຕາມ ທີ່ໄດ້ກຳນົດໄວ້ໃນກົດໝາຍຢ່າງເຂັ້ມງວດ;
6. ເພີ່ມທະວີການຕິດຕາມ ແລະ ຊຸກຍູ້ ແກ້ໄຂຜົນການກວດກາຕາມຜົນການກວດສອບ ໃຫ້ເຂັ້ມງວດ, ຂາດຕົວ ແລະ ສຳເລັດໂດຍໄວ; ໃນກໍລະນີ ມີການລະເມີດທາງແພ່ງ ຫຼື ອາຍາ ຕ້ອງສົ່ງສຳນວນ ເອກະສານກວດກາ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຫຼື ອົງການໄອຍະການປະຊາຊົນ ຮ້ອງຟ້ອງຕໍ່ສານ ປະຊາຊົນ ຕາມກົດໝາຍວ່າດ້ວຍການກວດກາລັດ ມາດຕາ 23, 24 ແລະ 25;
7. ສືບຕໍ່ປະສານສົມທົບ ກັບອົງການກວດສອບປະຈຳພາກເໜືອ ໃຫ້ເລິກເຊິ່ງ, ມີຄວາມກົມກຽວ ແລະ ຄ່ອງຕົວຫຼາຍຂຶ້ນກວ່າເກົ່າ, ໂດຍສະເພາະການແລກປ່ຽນບົດຮຽນ, ການສະໜອງຂໍ້ມູນ ແລະ ເຂົ້າ ຮ່ວມແກ້ໄຂຜົນການກວດກາ ທີ່ຍັງຄ້າງໃນໄລຍະຜ່ານມາໃຫ້ຂາດຕົວ ແລະ ສຳເລັດໂດຍໄວ;
8. ເພີ່ມທະວີການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງວຽກງານ ກວດກາລັດແຂວງ ແລະ ຊຸກຍູ້ການແກ້ໄຂຜົນການກວດກາຕາມຜົນການກວດສອບ ຢ່າງເຂັ້ມງວດ, ຂາດຕົວ ແລະ ສຳເລັດໂດຍໄວ;
9. ຕິດຕາມກວດກາ ຄວາມສອດຄ່ອງ ແລະ ຄວາມສັກສິດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ ກົດໝາຍທີ່ ຕິດພັນກັບວຽກງານກວດກາ ພ້ອມທັງຊຸກຍູ້ອົງການປົກຄອງແຂວງ, ເມືອງ ອຳນວຍຄວາມ ສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານກວດກາ ໃຫ້ມີປະສິດທິພາບ, ປະສິດທິຜົນ.

**ມາດຕາ 4 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ ອົງການກວດກາລັດແຂວງ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການຂອງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການ ເງິນ, ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ຢູ່ບັນດາ ເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ.**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງມີລັນ ຄຳພັນເພັງ

CamScanner